# ວທການກວດພະຍາດ COVID-19 ໃນ Rhode Island ໃນລະດຮອນນ

ມີຫຼາຍບ່ອນທີ່ຊາວ Rhode Island ສາມາດກວດພະຍາດ COVID-19 ໄດ້. ບັນດາສະຖານທີ່ກວດພະຍາດ COVID-19 ທີ່ດຳເນີນໂດຍລັດຈະປິດລົງໃນທ້າຍເດືອນ ມິຖຸນາ 2022. ລັດອາດຈະເປີດສະຖານທີ່ກວດບາງແຫ່ງຄືນໃໝ່ ຖ້າລະດັບພະຍາດ COVID-19 ໃນຊຸມຊົນສູງ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າໄປທີ່ **covid.ri.gov/testing**.

## ຫ້ອງການດູແລຫຼັກ

ໂທຫາຜູ້ໃຫ້ບໍລິການປະຖົມພະຍາບານ ຫຼື ແພດເດັກຂອງລູກຂອງທ່ານ. ຖາມພວກເຂົາວ່າມີການກວດພະຍາດ COVID-19 ຢູ່ຫ້ອງການຂອງພວກເຂົາ ຫຼື ສາມາດສັ່ງໃຫ້ກວດຜ່ານຫ້ອງທົດລອງໄດ້ ຫຼື ບໍ່.

## ໂຄງການກວດເພື່ອປິ່ນປົວ

ໂດຍຜ່ານໂຄງການນີ້, ປະຊາຊົນສາມາດໄດ້ຮັບການກວດ ແລະ ຖ້າພວກເຂົາເປັນບວກ ແລະ ມີສິດໄດ້ຮັບການປິ່ນປົວໃຫ້ເອົາໃບສັ່ງແພດຈາກຜູ້ໃຫ້ບໍລິການດູແລສຸຂະພາບ ແລະ ປະກອບໃບສັ່ງແພດທັງໝົດຂອງພວກເຂົາຢູ່ບ່ອນດຽວບໍ່ວ່າພວກເຂົາຈະມີປະກັນໄພ ຫຼື ບໍ່ມີກໍຕາມ. ເພື່ອຊອກຫາສະຖານທີ່ທີ່ເຂົ້າຮ່ວມຢູ່ໃກ້ທ່ານ, ເຂົ້າໄປທີ່ **bit.ly/3vWlCm6**. ເພື່ອຂໍຄວາມຊ່ວຍເຫຼືອໃນຫຼາຍພາສາ, ໃຫ້ໂທຫາ **1-800-232-0233**.

## ການເພີ່ມການເຂົ້າເຖິງຊຸມຊົນເພື່ອກວດ (ICATT) ສຳລັບພະຍາດ COVID-19

ໂຄງການ ICATT ຂອງສູນຄວບຄຸມ ແລະ ປ້ອງກັນພະຍາດ ສາມາດຊ່ວຍທ່ານຊອກຫາບ່ອນກວດພະຍາດ COVID-19 ໃນຫ້ອງທົດລອງໄດ້ໂດຍບໍ່ເສຍຄ່າ ບໍ່ວ່າທ່ານຈະມີປະກັນໄພ ຫຼື ບໍ່ມີກໍຕາມ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າໄປທີ່ **bit.ly/3vquwJv**.

## ຮ້ານຂາຍຢາ

ເຂົ້າໄປທີ່ **CVS.com** ຫຼື **Walgreens.com** ເພື່ອຊອກຫາບ່ອນກວດແບບຂີ່ລົດຜ່ານທີ່ຢູ່ໃກ້ກັບທ່ານ. ຮ້ານຂາຍຢາທີ່ເຈົ້າຂອງເປັນຄົນທ້ອງຖິ່ນບາງແຫ່ງຍັງມີບໍລິການກວດພະຍາດ COVID-19 ນຳ. ເຂົ້າໄປອອນໄລນ໌ ຫຼື ໂທຫາເພື່ອນັດໝາຍ.

## ຄລີນິກ ແລະ ການດູແລດ່ວນ

ຄລີນິກບາງແຫ່ງຈະຮັບເອົາຄົນເຈັບໃໝ່ ຫຼື ຄົນເຈັບຈາກສະຖານທີ່ດູແລສຸຂະພາບແຫ່ງອື່ນ. ຄລີນິກບາງແຫ່ງຈະກວດສະເພາະຄົນເຈັບທີ່ມີຢູ່ແລ້ວເທົ່ານັ້ນ. ເພື່ອເບິ່ງລາຍຊື່ຄລີນິກທີ່ໃຫ້ບໍລິການກວດພະຍາດ COVID-19, ເຂົ້າໄປທີ່ **bit.ly/3f2gHIh**.

## ຢູ່ບ້ານ

ຊຸດເຄື່ອງມືທີ່ທ່ານສາມາດນຳໃຊ້ເພື່ອກວດພະຍາດ COVID-19 ໃຫ້ຕົວທ່ານເອງແມ່ນມີໃຫ້ຜ່ານໂຄງການຈຳໜ່າຍຂອງລັດຖະບານກາງ, ຮ້ານຂາຍຢາທ້ອງຖິ່ນ, ຮ້ານຂາຍຍ່ອຍອອນໄລນ໌ ແລະ ໂຮງຮຽນ ແລະ ແຄ້ມລະດູຮ້ອນບາງແຫ່ງ. ຊາວ Rhode Island ທຸກຄົນສາມາດສັ່ງຊື້ຊຸດເຄື່ອງມືກວດພະຍາດ COVID-19 ດ້ວຍຕົນເອງໂດຍບໍ່ເສຍຄ່າໄດ້ໂດຍການເຂົ້າໄປເບິ່ງ **covidtests.gov**. ລາຍງານຜົນກວດດ້ວຍຕົນເອງຂອງທ່ານໃຫ້ RIDOH ທີ່ **portal.ri.gov/s/selftest**.

6/2/2022